ໂຄງການ
ປົກປັກຮັກສາ
ໜັງສືໃບລານລາວ
ການຮ່ວມມື ລາວ-ເຢຍຣະມັນ

# ຂ່າວໃບລານ

ປີທີ IX ສະບັບທີ 20 * ມິຖຸນາ 2002

PRESERVATION OF LAO MANUSCRIPTS PROGRAMME
LAO-GERMAN COOPERATION. NEWS BULLETIN • 20 june 2002



## ກອງປະຊຸມ ປູແຂວງ ຄຳມ່ວນ

ໂດຍ : ຄຳສິງ ວົງສະຫວ່າງ

ຄຳມ່ວນດິນແດນທຳມະຊາດ ປະຫວັດສາດວິລະຊົນ ຕົ້ນກຳເນີດລຳມະຫາໄຊ ກົບຊຸບໜໍ່ໄມ້ ແກງໄກ່ໃສ່ສານ ນະມັດສະການພະທາດສີໂຄດຕະບອງ ເຈົ້າຂອງເອົ້າໜົມປ່ານ ປະສານປວງປະຊາ ເລັ່ງລັດພັດທະນາ ຊ່ວຍປະຊາມີສຸກ.

ນັ້ນແມ່ນຄຳຂວັນຂອງແຂວງຄຳມ່ວນ ຊຶ່ງເປັນດິນແດນພາກກາງຂອງປະເທດເຮົາ ເຊີຍຈະເລີນຮຸ່ງເຮືອງທາງດ້ານວັດທະນະທຳ ແລະ ສະຖາປັດຕະຍະກຳສະໄໝກ່ອນມີນາມວ່າ: ອານາຈັກສີໂຄດຕະບອງ ຊຶ່ງມີຮ່ອງຮອຍວັດຖຸບູຮານອັນພົ້ນເດັ່ນ ມີລັກສະນະປະຫວັດສາດ ພວກເຮົາເຈົ້າຂ້ອຍກໍ່ເຄີຍໂຄຣົບນັບຖື ຕິດພັນກັບປະຊາຊົນຊາວແຂວງຄຳມ່ວນ ໂດຍຕະລອດມາເຖິງປັດຈຸບັນນີ້ກໍ່ຄື : ພະທາດສີໂຄດຕະບອງ, ພະທາດຕູມພະວັງ ແລະ ສະຖານທີ່ວັດວາອາຣາມຕ່າງໆ.
ເພື່ອເປັນການປົກປັກຮັກສາມູນມໍລະດົກ ກໍ່ຄືຟູມເປັນຍາບັນພະບູລຸດຂອງຊາວແຂວງຄຳມ່ວນໃຫ້ເປັນຮູບປະທຳ ຍິ່ງໆ

**ຂຶ້ນນັ້ນ ມາໃນວັນທີ 02/04/2001 ຢູ່ທີ່ສະໂມສອນ 21 ມີນາ** ໄດ້ມີພິທີເປີດສຳມະນາວິຊາການປົກປັກຮັກສາໜັງສືໃບລານຂຶ້ນຢ່າງເປັນທາງການ. ໂດຍມີ ທ່ານ ພັນດວງຈິດ ວົງສາ, ລັດຖະມົນຕີກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ເປັນປະທານກອງປະຊຸມ ເປັນກຽດເຂົ້າຮ່ວມ ມີທູດວັດທະນະທຳ ສ.ສ. ເຢຍຣະມັນ ທ່ານ ນາງ ໄວໂອລາວິນເຕີຊິນ,





ຫົວໜ້າກົມພິມຈຳໜ່າຍ ແລະ ຫໍສະໝຸດ ທ່ານ ດຣ. ຈັນທະພິລິດ ຈຽມສີສຸລາດ, ທ່ານ ນາງ ກົງເດືອນ ເນດຕະວົງ ອຳນວຍການຫໍສະໝຸດແຫ່ງຊາດ ທັງເປັນຫົວໜ້າໂຄງການປົກປັກຮັກສາໜັງສືໃບລານລາວ, ທ່ານ ດຣ. ຮະຣັນ ຮຸນດິອຸສ ຊ່ຽວຊານເຢຍຣະມັນ ທີ່ປຶກສາກິຕິມະສັກປະຈຳໂຄງການໃບລານລາວ, ທ່ານ ໂອໃດ ໂສດາພອນ ຮອງເລຂາພັກແຂວງ ຮອງເຈົ້າແຂວງ ຄຳມ່ວນ, ຍາທ່ານ ບົວໄຂ ພັນທະວົງ ປະທານ ອ.ພ.ສ. ແຂວງ, ທ່ານ ນາງ ດາລາ ກົມລະຍາ ກຳມະການປະຈຳສູນກາງແນວລາວສ້າງຊາດ ທີ່ປຶກສາປະຈຳໂຄງການ ພ້ອມດ້ວຍ ອ.ພ.ສ. ເມືອງ ແລະ ຫົວໜ້າວັດທະນະທຳເມືອງແຕ່ລະເມືອງໃນ 9 ເມືອງ, ນອກນັ້ນກໍ່ຍັງມີຜູ້ຕາງໜ້າອົງການຈັດຕັ້ງມະຫາຊົນອ້ອມຂ້າງແຂວງເຂົ້າຮ່ວມ ລວມທັງໝົດ 70 ທ່ານ.

ການສຳມະນາໃນຄັ້ງນີ້ ຜູ້ຕາງໜ້າແຕ່ລະເມືອງ **ກໍ່ໄດ້ຂຶ້ນລາຍງານສະພາບວັດຖຸບູຮານ ກໍ່ຄືໜັງສືໃບລານ** ຢູ່ເມືອງຂອງຕົນ ໃຫ້ທີ່ປະຊຸມໄດ້ຮັບຊາບ ຈາກນັ້ນ ກໍ່ໄດ້ລົງພາກປະຕິບັດຕົວຈິງ ຢູ່ວັດນັນທະຄາມ (ກາງ) ເພື່ອເຮັດໃຫ້ບັນດາທ່ານນັກສຳມະນາກອນ ທີ່ມາຈາກເມືອງຕ່າງໆ ໄດ້ຮູ້ຕື່ມກ່ຽວກັບວິທີວິທະຍາ ການປົກປັກຮັກສາໜັງສືໃບລານສະໄໝໃໝ່. ທາງໜ່ວຍສຳຫລວດກໍ່ໄດ້ສາທິດທຸກຂັ້ນຕອນ ແລະ ອະທິບາຍລະອຽດໃນການນຳໃຊ້ກໍ່ຄືວິທີປົກປັກຮັກສາໃນອະນາຄົດ. ໃນບັນດາສຳມະນາກອນ ສ່ວນຫຼາຍກໍ່ເຄີຍບວດຮຽນມາແລ້ວ ສາມາດອ່ານໂຕທັມໄດ້ ເຮັດໃຫ້ຄວາມເຂົ້າໃຈການຂຶ້ນບັນຊີ ແລະ ນຳໃຊ້ໄດ້ດີ. ກອງປະຊຸມຄັ້ງນີ້ ບັນດາທ່ານຜູ້ແທນ ຕ່າງໆກໍ່ສະແດງອອກໃນຄວາມເປັນຫ່ວງຄຳພີໃບລານ ທີ່ເຄີຍຕົກເຮັ່ຽເສຍຫາຍມາແລ້ວ ຢ່າງນັບບໍ່ຖ້ວນ ແລະ ພ້ອມແລ້ວຈະໃຫ້ຄວາມຮ່ວມມືປົກປັກຮັກສາສືບຕໍ່ໄປ. ກອງປະຊຸມໄດ້ປິດລົງວັນທີ 04/04/2001 ດ້ວຍຜົນສຳເລັດຢ່າງຈົບງາມ.

# ກອງຄຳພີ ຢູ່ ເມືອງຟອງວີບ

ໂດຍ : ຄຳສິງ ວົງສະຫວ່າງ

ຊ່ຽວຊານໂອ້ລົມກັບຊາວບ້ານໆຫີນບູນເໜືອ



ໃນວັນທີ 22 ກັນຍາ 2001 ຫນ່ວຍງານສຳຫລວດ ແລະ ປົກປັກຮັກສາຫນັງສືໃບລານລາວທີ່ກຳລັງເຄື່ອນໄຫວຢູ່ເຂດເມືອງຫີນບູນແຂວງຄຳມ່ວນ ໄດ້ມີໂອກາດຕ້ອນຮັບຄະນະໂຄງການ ແລະ ການນຳແຂວງ ທີ່ລົງໄປຢ້ຽມຢາມຊາວບ້ານ ພ້ອມດ້ວຍ ທ່ານ ສາດສະດາຈານ ດຣ. ຣະຣັນ ຣຸນດິອຸສ ຊ່ຽວຊານເຢຍຣະມັນ ທີ່ປຶກສາກິຕິມະສັກ ແລະ ທ່ານ ນາງ ດາຣາ ກັນລະຍາ ທີປຶກສາປະຈຳໂຄງການໃບລານ. ໃນໂອກາດນີ້ທາງຄະນະໂຄງການກໍ່ໄດ້ໂອ້ລົມກັບຊາວບ້ານ ເວົ້າເຖິງຄວາມເປັນມາຂອງໂຄງການຄວາມຫມາຍຄວາມສຳຄັນຂອງຫນັງສືໃບລານ. ມີບາງຕອນ ທ່ານ ຣະຣັນ ຣຸນດິອຸສ ກໍ່ໄດ້ກ່າວວ່າ:

" ຂ້າພະເຈົ້າເຄີຍຜ່ານໄປມາຫລາຍຄັ້ງ ແຕ່ບໍ່ໄດ້ແວ່ເຂົ້າມາຈັກເທື່ອ ຄັ້ງນີ້ແມ່ນໄດ້ມີໂອກາດມາຢ້ຽມຢາມກຸງມຂາວ ໃຊ້ເວລາໃນການເດີນທາງເຂົ້າມາແຕ່ເມືອງທ່າແຂກກໍ່ບໍ່ນ້ອຍປານໃດ ແລ້ວມາເຫັນຫນັງສືໃບລານທີ່ເປັນຜູກເປັນມັດກອງຢູ່ນີ້ຫລາຍສິບຄວບ ຢູ່ໃນຫມູ່ບ້ານ ຈັ່ງຊີ້ ໃນຊຸມຊົນນີ້ ເຄີຍແມ່ນຊຸມຊົນທີ່ມີວັດທະນະທັມເປັນຊຸມຊົນທີ່ມີການສຶກສາພະທັມຄຳສອນ ຂອງອົງສົມມາສົມພຸດທະເຈົ້າ ຊຶ່ງເປັນເລື່ອງທີ່ຫນ້າຊົມເຊີຍ ເຖິງແມ່ນວ່າປະເທດລາວຢູ່ຫ່າງໄກບ່ອນຈະເລີນ ແບບອະຣິຍະທຳສະໄຫມໃຫມ່ ແຕ່ມີວັດທະນະທັມອັນເກົ່າແກ່ມີຫນັງສືຫນັງຫາ ມີຄຳພີໃບລານທີ່ເກີດຈາກຄວາມອຸດສາຫະວິຣິຍະມານະຂອງບັນພະບຸລຸດມານັ່ງຂີດຂຽນໃບລານແລ້ວມີ

## ເຊີນອ່ານ


| | ຫນ້າ |
|---|---|
| ○ ກອງປະຊຸມຢູ່ແຂວງຄຳມ່ວນ.... | 1 |
| ○ ກອງຄຳພີ........ | 3 |
| ○ ກອງປະຊຸມສະຫລຸບ....... | 5 |
| ○ ຄວາມປັດເຄາະ...... | 6 |
| ○ ສັກກະລາດໃຫມ່.... | 7 |
| ○ ກອງປະຊຸມກະກຽມ....... | 8 |
| ○ ມອບເງິນ...... | 9 |
| ○ ການສຳຫລວດ........ | 10 |
| ○ ກອນປູ່ສອນຫລານ..... | 12 |
| ○ ຍອດນ້ຳອຸລາ.... | 13 |



ຄະນະປົກປັກຮັກສາຫນັງສືໃບລານຢູ່ບ້ານຫີນບູນເຫນືອ

ການນຳໃຊ້. ທັງນີ້ທັງນັ້ນຍ່ອມສະແດງໃຫ້ເຫັນວ່າ ປະເທດລາວ ເປັນປະເທດທີ່ມີວັດທະນະທຳອັນເກົ່າແກ່ ເຊິ່ງຈະໄດ້ເຜີຍແຜ່ສູ່ໂລກພາຍນອກນຳ ໂດຍສະເພາະຢ່າງຍິ່ງ ໃນໂລກທີ່ຍັງບໍ່ທັນເຂົ້າໃຈປະຫວັດສາດ ຫລື ວັດທະນະທຳ ທາງຕາເວັນອອກຢ່າງພຽງພໍ ເຊັ່ນ ປະເທດຂ້າພະເຈົ້າກໍ່ມີມະຫາວິທະຍາໄລຫລາຍສິບແຫ່ງ ແຕ່ວ່າການສຶກສາເລື່ອງວັດທະນະທຳ, ເລື່ອງພາສາ, ເລື່ອງວັນນະຄະດີລາວ ອາດສິບໍ່ມີເລີຍ ມີແຕ່ບ່ອນສອງບ່ອນເທົ່ານັ້ນ. ຂ້າພະເຈົ້າກໍ່ມີຄວາມປິຕິຍິນດີຢູ່ວ່າ ໃນວັດນີ້ ເຖິງແມ່ນຢູ່ຫ່າງໄກຈາກໂລກຕາເວັນຕົກກໍ່ມີກອງຄຳພີໃບລານເຖິງຂະນາດນີ້ ສະແດງວ່າເຄີຍຮຸ່ງເຮືອງມາກ່ອນ. ແລ້ວສະໄຫມນີ້ຫວັງວ່າຍັງມີຄົນໃຊ້ຢູ່ແດ່. ສ່ວນໃຈຂ້າພະເຈົ້າຂໍຝາກຄວາມຄາດຫວັງຂໍປາດກະຫນາໄວ້ວ່າ ຂໍໃຫ້ໄທບ້ານ ແລະ ພະສົງອົງຄະເຈົ້າໄດ້ນຳໃຊ້ຄຳພີໃບລານນີ້ ເອົາມາອ່ານເອົາມາສຶກສາ ເພາະວ່າເນື້ອໃນຂອງເລື່ອງເຫລົ່ານີ້ຫລາຍຕໍ່ຫລາຍເລື່ອງ ມັນເປັນສັກອີພະຍານອັນສູງສົ່ງໃນດ້ານແນວຄວາມຄິດ ມີຄະຕິຄຳສອນທີ່ມີຄຸນຄ່າ ແລະເປັນພາສາທີ່ສະງ່າຜ່າເຜີຍ ເພິ່ນມີສະມາທິສູງ ຢູ່ໃນວັດທະນະທຳ ຂອງຕົວເອງ ຫລາຍເສັ້ນຄົນ ກ່ອນຫນ້ານັ້ນ ແລ້ວເພິ່ນກໍ່ມີເວລາຂຽນເປັນປະຫວັດສາດຫລາຍຮ້ອຍປີມາແລ້ວ ກໍ່ຄວນສິມີການສືບຕໍ່ບໍ່ໃຫ້ມັນເສຽ ບໍ່ໃຫ້ມັນຕາຍ ໃຫ້ຍືນຍົງຄົງໂຕໄປອີກຫລາຍເສັ້ນຄົນ ໃຫ້ລູກຫລານເຫລັນໄດ້ມີໂອກາດສຶກສາຮ່ຳຮຽນຈາກຫນັງສືເຫລົ່ານີ້ "

ຫລັງຈາກນັ້ນ ຊາວບ້ານກໍ່ໄດ້ສະແດງຄວາມດີໃຈ ທີ່ໄດ້ຮູ້ຈັກຄຸນຄ່າຂອງການປົກປັກຮັກສາຫນັງສືໃບລານ ທັງສະແດງນ້ຳໃຈໃຫ້ຊາວຕ່າງປະເທດໄດ້ເຫັນ ເຖິງວັດທະນະທຳອັນດີງາມຂອງທ້ອງຖິ່ນຕົນຈຶ່ງໄດ້ຈັດພິທີບາສີສູ່ຂວັນໃຫ້ຄະນະໂຄງການ ພ້ອມທັງຫນ່ວຍສຳຫລວດ. ພາຍຫລັງການສຳຫລວດແລ້ວ ຢູ່ວັດສີບຸນເຮືອງນີ້ ມີຫນັງສືທັງຫມົດ 994 ຜູກ. ເພິ່ນກໍ່ໄດ້ຈັດຕັ້ງຄະນະປົກປັກຮັກສາປະຈຳບ້ານຂຶ້ນຄື : 1. ຍາທ່ານ ສົມສັກ, 2. ທ່ານ ມະຫາຈູມ, 3. ທ່ານ ລຸງເຜັງ (ແນວໂຮມ), 4. ທ່ານ ສຸພາລັກ ວໍລະບັນ ຄະນະດັ່ງກ່າວ ເພິ່ນກໍ່ມີຫນ້າທີ່ເບິ່ງແຍງຫນັງສືບໍ່ໃຫ້ຕົກເຮັ່ຽເສັ່ຽຫາຍອີກ.

ບ້ານຫີນບູນເຫນືອຕາມການເລົ່າຂານແມ່ນເຜົ່າຫຍໍ້ທີ່ລ່ອງແພມາ ແຕ່ທົ່ງສາ ແລ້ວມາຕັ້ງຖິ່ນຖານຢູ່ປາກນ້ຳນີ້ມີຊື່ວ່າ ເມືອງຟອງວິນ ຕັ້ງກ່ອນຕົວເມືອງທ່າແຂກອີກຊ້ຳ ປັດຈຸບັນມີ 97 ຫລັງເຮືອນ 110 ຄອບຄົວ ເຮັດນາແມ່ນ ອາຊີບຕົ້ນຕໍ 70% ກຸ້ມກິນ ຊາວບ້ານມີຄວາມສະຫງົບສຸກສາມັກຄີດີ.

***



# ກອງປະຊຸມສະຫລຸບຜົນງານປະຈຳປີ 2000-2001

ໂດຍ : ອັນທະມາລີ

*ໃນວັນທີ* 12 ຕຸລາ 2001 ໂຄງການປົກປັກຮັກສາຫນັງສືໃບລານ ລາວ ໄດ້ຈັດພິທີສະຫລຸບຜົນງານການເຄື່ອນໄຫວ ປີ 2000-2001 ເຂົ້າຮ່ວມໃນພິທີມີ ທ່ານ ຈັນທະພິລິດ ຈຽມສີສຸລາດ ຫົວຫນ້າກົມພິມຈຳ ຫນ່າຍ ແລະ ຫໍສະຫມຸດ, ທ່ານ ນາງໄວໂອລາ ວິນເຕີຊິນ ທູດວັດທະນະທຳ ສ.ສ. ເຢຍຣະມັນປະຈຳລາວ ທ່ານ ສາສະດາຈານ ດຣ. ດຣ. ຣະຣັນ ຣຸນດິອຸສ ຊ່ຽວຊານກິຕິມະສັກປະຈຳໂຄງການໃບລານລາວ ທ່ານນາງ ດາລາ ກັນລະຍາ ທີ່ປຶກສາປະຈຳໂຄງການໃບລານລາວ ພຣະອາຈານ ບຸນສີ ວົງພູມີ ຫົວໜ້າຫ້ອງການ ອ.ພ.ສ. ສູນກາງ, ພະອາຈານນວນຕາ ຄະນະ ອ.ພ.ສ. ສູນກາງ ບັນດາຫົວຫນ້າກົມ ຮອງຫົວຫນ້າກົມ ພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມ ຈຳນວນ 48 ຄົນ.



ໃນພິທີ ທ່ານ ນາງ ກົງເດືອນ ເນດຕະວົງ ຫົວຫນ້າໂຄງການປົກປັກຮັກສາຫນັງສືໃບລານລາວ ໄດ້ຍົກໃຫ້ເຫັນການເຄື່ອນໄຫວ ແລະ ຜົນງານທີ່ພົ້ນເດັ່ນຫລາຍດ້ານໃນໄລຍະ 1 ປີ. ໂຄງການປົກປັກຮັກສາຫນັງສືໃບລານລາວໄດ້ສຳຫຼວດຢູ່ແຂວງຄຳມ່ວນ ແລະ ສະຫວັນນະເຂດ. ໃນແຂວງສະຫວັນນະເຂດໄດ້ເຄື່ອນໄຫວສຳຫລວດຢູ່ໃນ 7 ຕົວເມືອງໃນ 70 ວັດ ທັງຫມົດ ມີ 46.548 ຜູກ. ພິເສດ ຢູ່ເມືອງຈຳ ພອນມີເອກະສານຫລາຍກວ່າຫມູ່ຄື 31 ພັນກວາຜູກ. ແຂວງຄຳມ່ວນໄດ້ເຄື່ອນໄຫວສຳຫລວດແລ້ວ 4 ຕົວເມືອງ ມີ 18 ວັດ ທັງຫມົດ 9.440 ຜູກ. ການສຳຫລວດຢູ່ແຂວງຄຳມ່ວນມີຄວາມຫຍຸ້ງຍາກໃນການເດີນທາງ ເພາະວ່ານ້ຳກ້ອມທາງເຮັດໃຫ້ການເຄື່ອນໄຫວຕ້ອງຢຸດເປັນໄລຍະ. ວຽກງານການຖ່າຍໄມໂຄຼຟິມ ຖ່າຍທຳຢູ່ແຂວງຈຳປາສັກສາມາດຖ່າຍໄດ້ 71 ມ້ວນ 201 ເລື່ອງ 1.024 ຜູກ 41.735 ໃບ. ຫນ່ວຍອັດສຳເນົາ ແລະ ລ້າງຟິມສາມາດລ້າງຟິມ Master ໄດ້ 86 ມ້ວນ. ລ້າງຟິມ Copy ໄດ້ 198 ມ້ວນ ພ້ອມທັງ Copy 198 ມ້ວນ. ທາງດ້ານການບໍລິການ Microfilm ຫນັງສືຜູກໃບລານລາວ, ບັນນາລັກກໍ່ໄດ້ໃຫ້ຄວາມສະດວກແກ່ຜູ້ໃຊ້ບໍລິການຕາມຄວາມເຫມາະສົມ ສາມາດບໍລິການໄດ້ 18 ເລື່ອງ 68 ຜູກ 338 ໃບ.

ວຽກງານຊຸກຍູ້ການສຶກສາສົງ ໄດ້ຊຸກຍູ້ສົ່ງເສີມການຮຽນອັກສອນທັມ ພາສາບາລີ ແລະ ວັນນະຄະດີລາວ ເພື່ອເຮັດໃຫ້ພະສົງສາມະເນນຜູ້ຫນຸ່ມນ້ອຍ ແລະ ນັກສຶກສາຮຸ່ນສືບທອດໄດ້ມີນ້ຳໃຈຮັກແພງ ເປັນເຈົ້າການປົກປັກຮັກສາມໍລະດົກທາງວັດທະນະທຳ ແລະ ວັນນະຄະດີຂອງຊາດ ສືບຕໍ່ໄປ ໂຄງການປົກປັກຮັກສາຫນັງສືໃບລານລາວ ໄດ້ມອບທຶນສຶກສາໃຫ້ແກ່ພາກວິຊາພາສາລາວ-ວັນນະຄະດີ ມະຫາວິທະຍາໄລແຫ່ງຊາດ, ວິທະຍາໄລສົງອົງຕື້ ແລະ ອ.ພ.ສ.ແຂວງຄຳມ່ວນໂຮມເປັນເງິນ 75.524.400 ກີບ

ເພື່ອຍົກໃຫ້ເຫັນບົດບາດວັນນະຄະດີກໍ່ຄືພູມປັນຍາຂອງບັນພະບູລຸດລາວທີ່ບັນທຶກໄວ້ຢູ່ນຳໃບລານນັ້ນ ໂຄງການໃບລານລາວໄດ້ຈັດກອງປະຊຸມສຳມະນາວິຊາການພາຍໃຕ້ຫົວຂໍ້ທີ່ວ່າ " **ໂຄງການໃບລານລາວ 9 ປີ** " ແລະ " **ວັນນະຄະດີລາວ : ອະດີດ ປັດຈຸບັນ ແລະ ອະນາຄົດ** " ໃນນັ້ນໄດ້ມີນັກຄົ້ນຄວ້າທັງພາຍໃນ ແລະ ຕ່າງປະເທດ ຈຳນວນສິບກວ່າທ່ານເຂົ້າຮ່ວມ ແລະ ສະເຫນີຜົນງານການຄົ້ນຄວ້າຂອງຕົນຈາກຫນັງສືໃບລານລາວ ພ້ອມດ້ວຍນັກສຶກສາ ຄູ ແລະ ພະສົງ ຜູ້ສົນໃຈເຂົ້າຟັງອີກ 70 ຄົນ/ອົງ.

ທ່ານ ສາສະດາຈານ ດຣ.ດຣ. ຣະຣັນ ຣຸນດິອຸສ ມີຄວາມເຫັນຕໍ່ກອງປະຊຸມ ທ່ານມີຄວາມດີໃຈທີ່ມີການຮ່ວມມືກັບລັດຖະບານລາວ ເປັນໂຄງການທີ່ຍາວນານພໍ

**ອ່ານຕໍ່ໜ້າ 7**

# ຄວາມປັດເຄາະ ເວລາຜູກແຂນ

*ຂອງລຸງທິດບາງ ບ້ານຜາໂຄ້ງ*
*ເກັບກຳໂດຍ : ຄຳສິງ*

ກວາດພົ້ງ !! ວະນິປະຕິປະຕິງ ປະຫາຍຍະ (ເວົ້າ 3 ເທື່ອ)

ກວາດຮ້າຍ ກວາດມາດ ເຄາະມື້ຜີປັບ ເຄາະວັນຜີແຕ່ງ ສິກວາດອອກເສັ້ຽມື້ນີ້ວັນນີ້ !
ເຄາະໄມ້ຕ່ອງແຕ່ງມາຕ້ອງປາຍຕີນປາຍມື ສິກວາດອອກເສັ້ຽມື້ນີ້ວັນນີ້ !
ເຄາະຈູມກືມາຕ້ອງຈູມຄ້ອງ ສິກວາດອອກເສັ້ຽມື້ນີ້ວັນນີ້ !
ເຄາະສະລ່ອງງ້ອງທີ່ຫມາກຫົວໃຈ ສິກວາດອອກເສັ້ຽມື້ນີ້ວັນນີ້ !
ເຄາະໃຫຍ່ໆໂຕທີ່ແມ່ຄວາຍ ສິກວາດອອກເສັ້ຽມື້ນີ້ວັນນີ້ !
ເຄາະລາຍໆສິ່ງແມ່ກັບແກ້ ສິກວາດອອກເສັ້ຽມື້ນີ້ວັນນີ້ !
ເຄາະແຫລ້ງສິ່ງແມ່ຫອຍປັງ ສິກວາດອອກເສັ້ຽມື້ນີ້ວັນນີ້ !
ເຄາະສະລັງວັງສິ່ງແມ່ກຳເນີດ ສິກວາດອອກເສັ້ຽມື້ນີ້ວັນນີ້ !
ໃຫ້ສູໄປເກີດກ້ຳ ຜາໃດ - ຜາດ່າງພຸ້ນເນີ
ຂຶ້ນເມືອພູຕ້ອງຜີປີ່ງ ສິກວາດອອກເສັ້ຽມື້ນີ້ວັນນີ້ !

ອອກເມືອທີ່ງ ຕ້ອງຜີຈູມປວກ ບວກຫມູ ຜີລັນລູໃຫ້ຢູ່ນອກບ້ານ ຜີຂີ້ຄ້ານພາຫມູ່ເຈົ້ານອນເວັນ ເຮັດເຈັບເຮັດໄຂ້ ເຮັດເຈັບຫົວມົວຕາ ໃຫ້ອອກເສັ້ຽມື້ນີ້ວັນນີ້. ໃຫ້ສູຫນີເມືອບິນດັ່ງຫມອກ ອອກນອກຟ້າ ເຫມືອນດັ່ງຄວັນໄຟ ໃຫ້ສູໄປຢູ່ໂລກກວ້າງຫີມມະພານທັງສີ່ພຸ້ນເນີ ສິບປີກະບໍ່ໃຫ້ມາເຕົ້າ ເກົ້າປີກະບໍ່ໃຫ້ມາເຖິງ ທາງນີ້ບໍ່ໃຫ້ມາທ່ອງ ປ່ອງນີ້ບໍ່ໃຫ້ມາຫຽວ ໃຫ້ໄປຢູ່ພູເຂົາຂຽວເສົາສະເຫມນນອກຟ້າ ໃຕ້ຖະແລ່ງຫລ້າຍັງແທ່ນອິງກູ ອິມທຸເລທຸລາຍສະຫາຍຍະ !
- ສັພພະສີວິຊາ ສັພພະທະ ສັພພະທາ ສັພພະປານິບັງ ສັພພະໂສປີ ນິວະ ເລນຕິ ປະລິຕັນຕຳພະນາມມະ ຫາຍຍະ
- ສັພພະທຸກ ສັພພະໂສກ ສັພພະໂຣກ ສັພພະໄພ ສັພພະເຄາະ ຂີ້ດຽດຈັງໄຮ ວິບາດສັນຕິ ອິໃສ່ສຸ ສຸໃສ່ອິ ສະຫາຍຍະ ! ຫາຍໄປເນີ ມື້ເຄາະມື້ເຂັນ ມື້ເຈັບມື້ໄຂ້......ພຸ້ນ....ໃຫ້ໄປເມືອງຫລາຍລ້ານ ບ້ານຫລາຍຫລັງພຸ້ນເນີ ! ພົ້ງ......



ການບາສີສູ່ຂວັນຂອງຊາວບ້ານຍາງຄຳ ເມືອງເຊບັ້ງໄຟ

# ສັກກະລາດໃຫມ່ ຂອງວັດທະນະທັມລາວ

ຄວາມຄິດເຫັນ ຂອງລຸງເສັງ ແນວໂຣມ ບ້ານເກີນກາງ ຕໍ່ກັບວຽກງານ ການຖ່າຍໄມໂຄຼຟີມ

**ການ** ປົກປັກຮັກສາແນວນີ້ມັນບໍ່ແມ່ນ. ເອົາໄວ້ລ້າໆ ແມ່ນການເປີດກວ້າງ ເພື່ອເຮັດໃຫ້ທຸກຊັ້ນຄົນບັນດາປະຊາຊາດທັງຫລາຍໄດ້ເຫັນບົດບາດຄວາມສຳຄັນ ຂອງບັນພະບູລຸດພວກເຮົາ ຕັ້ງແຕ່ບູຮານນະການ.



ແຕ່ຂ້າພະເຈົ້າຮູ້ຈັກຄວາມມານີ້ ການປົກປັກຮັກສາແບບນີ້ບໍ່ທັນເຄີຍມີ ເຫັນວ່າພາຍຫລັງປະເທດຊາດໄດ້ຮັບການປົດປ່ອຍ ພັກ-ລັດ ກໍ່ໄດ້ມີຄວາມເອົາໃຈໃສ່ປະຕິບັດສອງຫນ້າທີ່ຍຸດທະສາດ ຄືປົກປັກຮັກສາ ແລະ ສ້າງສາປະເທດຊາດ. ອັນນີ້ກໍ່ແມ່ນຫນ້າທີ່ນຶ່ງທີ່ນອນຢູ່ໃນຍຸດທະສາດດັ່ງກ່າວນັ້ນ. ລັດຖະບານລາວ ແລະ ເຢຍຣະມັນຮ່ວມມືກັນ ແມ່ນເປັນການເປີດສັກກະລາດໃຫມ່ ເຮັດໃຫ້ການຮ່ວມມືເກີດດອກອອກຜົນຢ່າງແທ້ຈິງ. ອີກອັນນຶ່ງ ນັກຄົ້ນຄວ້າກໍ່ຄືຊາວຕ່າງປະເທດທັງຫລາຍ ທີ່ບໍ່ເຄີຍຮູ້ເຫັນປະເທດລາວໃນເມື່ອກ່ອນ ຕໍ່ຫນ້າໄປກໍ່ຈະຮູ້ຈັກຄວາມຍິ່ງໃຫຍ່ທາງວັດທະນະທັມຂອງຊາດລາວໃນອະດີດໄດ້ ໂດຍການອ່ານຈາກຫນັງສືທັມທີ່ພວກເຮົາກຳລັງບັນທຶກໃສ່ໄມໂຄຼຟີມໄວ້ນີ້.

ດຽວນີ້ຄົນສ່ວນຫລາຍອ່ານຫນັງສືທັມບໍ່ໄດ້ແລ້ວ ເພາະວ່າໂຮງຮຽນໄດ້ຍ້າຍອອກຈາກວັດ ເມື່ອກ່ອນວັດແມ່ນໂຮງຮຽນ ຄົນຈຶ່ງຮຽນຫນັງສືທັມເປັນຫລັກສູດ ເພື່ອໃຫ້ຕົນເອງມີຄວາມຮູ້ຄວາມສະຫລາດ ຮູ້ອ່ານ-ຮູ້ຂຽນ ໂຕທັມເປັນຈຳນວນຫລວງຫລາຍ. ແຕ່ກົງກັນຂ້າມມາເຖິງດຽວນີ້ ຫລັກສູດອັນນັ້ນກໍ່ຖືກລືມເປັນສ່ວນຫລາຍ ທັງຜູ້ອ່ານ-ຜູ້ຂຽນກໍ່ຫາຍາກ. ເມື່ອມີການປົກປັກຮັກສາແລ້ວ ຂ້າພະເຈົ້າຢາກສະເຫນີນຳ ທາງລັດຖະບານລາວເຮົາ ແລະ ທາງລັດຖະບານເຢຍຣະມັນຕື່ມ ເຮັດແນວໃດເພື່ອໃຫ້ຫລັກສູດ ກໍ່ຄືພູມປັນຍາບັນພະບູລຸດທີ່ສະສົມມາຫລາຍ ສັດຕະວັດນີ້ໄດ້ຮັບການຖ່າຍທອດຢ່າງຕໍ່ເນື່ອງ ໃສ່ຫົວສະຫມອງລູກລາວ - ຫລານລາວຕໍ່ໄປ ຂໍຈົ່ງໄດ້ມີການແປ ຫລື ວ່າຮຽບຮຽງເປັນໂຕລາວ ປັດຈຸບັນກໍ່ຖ້າເຂົາຮູ້ອ່ານ ເຂົາກໍ່ຈະມີຄວາມສົນໃຈ ແລະ ຮູ້ເນື້ອໃນ ແລ້ວກໍ່ໃຫ້ເກີດຈິດສຳນຶກ ຮັກວັດທະນະທຳຮັກບ້ານເກີດເມືອງນອນມີຄວາມເອກອ້າງຢູ່ໃນຕົວ ແລະ ມີສົນທຳປະຈຳໃຈທຸກກ້ອນຫນ້າ. ຖ້າຫລັກສູດດັ່ງກ່າວຫາກເຂົ້າສູ່ພາກປະຕິບັດຕົວຈິງ ຄືໄດ້ສອນຢູ່ໃນໂຮງຮຽນແທ້ໆ ແຕ່ຂັ້ນປະຖົມພຸ້ນ ຂ້າພະເຈົ້າເຊື່ອວ່າ ພວກເຮົາຈະໄດ້ຮັບພູມຕ້ານທານຫລີບຫລີກ ວັດທະນະທັມທີ່ບໍ່ເປັນຕາເອົາ ຂອງຕ່າງປະເທດໄດ້. ທ້າຍສຸດນີ້ຂໍຝາກຄວາມຫວັງໄວ້ກັບພາກສ່ວນທີ່ຮັບຜິດຊອບ ກໍ່ຄື ພັກ-ລັດຖະບານເຮົາຈົ່ງເຮັດໃຫ້ພູມປັນຍາອັນນີ້ເຂົ້າສູ່ລູກຫລານໂດຍໄວ **ຢ້ານວ່າດົນໄປ ຫມຶດເສັ້ນເຮົາແລ້ວງົມສິບໍ່ເຫັນເງື່ອນ** ຂໍຂອບໃຈ.

ກອງປະຊຸມສະຫລຸບສົກງານ ( ຕໍ່ຈາກຫນ້າ ໕ )

ສົມຄວນ ປີນີ້ເປັນປີທີ ໑ ແລ້ວ ທີ່ໄດ້ຮັບທຶນອຸປະຖຳ ຂອງກະຊວງການຕ່າງປະເທດ ເຢຍຣະມັນ ທ່ານກ່າວວ່າ : ວຽກງານການເກັບກຳຫນັງສືໃບລານ ມີຜົນສຳເລັດເປັນຢ່າງດີ ຍ້ອນໄດ້ຮັບຄວາມເອົາໃຈໃສ່ ຈາກພໍ່ແມ່ປະຊາຊົນໃນທ້ອງຖິ່ນຕ່າງໆ ທີ່ໃຫ້ຄວາມຮ່ວມມື ສາມາດປຸກລະດົມພະສົງ ພໍ່ແມ່ປະຊາຊົນ ໃຫ້ເຂົ້າໃຈກ່ຽວກັບຫນັງສືຜູກໃບລານ ເຮັດໃຫ້ວຽກງານດັ່ງກ່າວໄດ້ຮັບຫມາກຜົນພໍສົມຄວນ.

## *ກອງປະຊຸມກະກຽມສ້າງຕັ້ງສູນ ປົກປັກຮັກສາໜັງສືຜູກໃບລານລາວ ຄັ້ງວັນທີ 8 ຕຸລາ 2001 ທີ່ຫໍປະຊຸມພູສີ*

*ໂດຍ : ຂັນທະມາລີ*



***ກອງ*** ປະຊຸມກະກຽມສ້າງຕັ້ງສູນປົກປັກຮັກສາໜັງສືໃບລານລາວ ໄດ້ຈັດຂຶ້ນຢູ່ ແຂວງຫລວງພະບາງ ເມື່ອວັນທີ 8 ຕຸລາ 2001 ທີ່ຫໍປະຊຸມພູສີ ພາຍໃຕ້ການເປັນປະທານຂອງ ທ່ານ ແຂກແກ້ວ ຊ້ອຍໄຊຍະ ລັດຖະມົນຕີຊ່ວຍວ່າການກະຊວງຖະແຫລງຂ່າວແລະວັດທະນະທັມ. ເປັນກຽດເຂົ້າຮ່ວມມີ ທ່ານ ສາສະດາຈານ ດຣ. ຮະຣັນຣຸນດິອຸສ ຊ່ຽວຊານກິຕິມະສັກປະຈຳໂຄງການໃບລານລາວ, ທ່ານ ນາງ ດາລາ ກັນລະຍາ ທີ່ປຶກສາປະຈຳໂຄງການໃບລານລາວ, ທ່ານ ນາງ ກິງເດືອນ ເນດຕະວົງ ຫົວໜ້າໂຄງການໃບລານລາວ, ທ່ານ ສິງຄຳ ພົມມະລັດ ກຳມະການພັກແຂວງ ແລະ ທັງເປັນຫົວໜ້າພະແນກຖະແຫລງຂ່າວ ແລະ ວັດທະນະທັມ ແຂວງຫລວງພະບາງ. ພຣະອາຈານບຸນສີ ວົງພູມີ ອ.ພ.ສ. ສູນກາງ ພ້ອມດ້ວຍພະອາຈານ ອ.ພ.ສ. ແຂວງ ແນວໂຮມຂັ້ນແຂວງ, ເມືອງ ແລະ ຜູ້ຊົງຄຸນວຸດທິ ແລະ ອຳນາດການປົກຄອງບ້ານ ເທດສະບານເມືອງ ເຂົ້າຮ່ວມ 60 ກວ່າທ່ານ.

ໃນກອງປະຊຸມນີ້ ຜູ້ເຂົ້າຮ່ວມແມ່ນ ໄດ້ພ້ອມກັນປຶກສາຫາລື ແລະ ປະກອບຄຳເຫັນ ໂດຍສະເພາະແມ່ນການປົກປັກຮັກສາໜັງສືໃບລານລາວ ຢູ່ແຂວງຫລວງພະບາງ ເພື່ອເປັນຈຸດສູນກາງໃນການທ້ອນໂຮມໜັງສືໃບລານລາວໃນແຂວງພາກເໜືອ ຄືໄດ້ພ້ອມກັນຄົ້ນຄວ້າເພື່ອຮັບຮອງເອົາ **ຫໍໄຕທັມມະຍານານຸສອນ ວັດໃຫມ່ສຸວັນນະພູມມາຣາມ** ເທດສະບານແຂວງຫລວງພະບາງ ເປັນບ່ອນເກັບມ້ຽນ ໜັງສືໃບລານຕົວແບບ ຂອງບັນດາແຂວງພາກເໜືອ ສ້າງເປັນຫ້ອງສະໝຸດ ເພື່ອໃຫ້ພະສົງສາມະເນນໄດ້ມາສຶກສາຄົ້ນຄວ້າຮ່ຳຮຽນ ເພື່ອນຳອອກເຜີຍແຜ່ໃຫ້ແກ່ສັງຄົມ ທັງສ້າງໃຫ້ເປັນບ່ອນທັດສະນະສຶກສາ ຂອງນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດອີກດ້ວຍ.

ການສ້າງຕັ້ງສູນດັ່ງກ່າວ ແມ່ນນອນຢູ່ໃນຜົນງານລວມອັນນຶ່ງຂອງໂຄງການປົກປັກຮັກສາໜັງສືໃບລານລາວ (ການຮ່ວມມື ລາວ - ເຢຍຣະມັນ) ຂອງກະຊວງຖະແຫລງຂ່າວ ແລະ ວັດທະນະທຳ.



## ມອບເງິນຊຸກຍູ້ການສຶກສາ ມະຫາວິທະຍາໄລແຫ່ງຊາດ

*ໂດຍ : ຄຳສິງ*

ເວລາ 10 ໂມງເຊົ້າ ຂອງວັນທີ 13/02/2002 ຢູ່ທີ່ຕຶກ ອະທິການບໍດີ ມະຫາວິທະຍາໄລແຫ່ງຊາດ (ດົງໂດກ) ໄດ້ມີພິທີມອບເງິນຊຸກຍູ້ການສຶກສາ ພາກວິຊາພາສາວັນນະຄະດີ ໂດຍແມ່ນໂຄງການປົກປັກຮັກສາຫນັງສືໃບລານ (ການຮ່ວມມື ລາວ - ເຢຍຣະມັນ) ໄດ້ນຳເອົາເງິນຈຳນວນ 20 ລ້ານກີບ ເພື່ອສົມທົບທຶນຊຸກຍູ້ການສຶກສາ ຜູ້ກ່າວມອບແມ່ນ **ທ່ານ ຄຣິສຈຽນ ເປີເກີ ເອກອັກຄະລັດຖະທູດ ສ.ສ. ເຢຍຣະມັນ ປະຈຳລາວ** ຜູ້ຮັບແມ່ນ ທ່ານ **ດຣ.ບໍ່ແສງຄຳ ວົງດາລາ ອະທິການບໍດີມະຫາວິທະຍາໄລ**ແຫ່ງຊາດ. ເປັນສັກຂີພະຍານໃນຄັ້ງນີ້ມີ ທ່ານ ດຣ. ຈັນທະພິລິດ ຈຽມສີສຸລາດ ຫົວຫນ້າກົມພິມຈຳຫນ່າຍ ແລະ ຫໍສະຫມຸດ ທ່ານ ນາງ ກົງເດືອນ ເນດຕະວົງ ອຳນວຍການຫໍສະຫມຸດແຫ່ງຊາດ, ພະນັກງານໂຄງການປົກປັກຮັກສາຫນັງສືໃບລານ ຄູອາຈານ ແລະ ນັກສຶກສາຈຳນວນນຶ່ງ. ການມອບເງິນຄັ້ງນີ້ກໍ່ເພື່ອນຳໃຊ້ເຂົ້າ ໃນວຽກງານສິດສອນ ແລະ ທຶນການສຶກສາຂອງພາກວິຊາພາສາວັນນະຄະດີລາວ ແນໃສ່ສ້າງບຸກຄະລາກອນດ້ານນີ້ ໃຫ້ຫລາຍຂຶ້ນ.



## ສຸພາສິດບູຮານ (ໂດຍ ມະຫາສີລາ ວີຣະວົງສ໌)

### ຂອງບໍ່ດີ 10 ຢ່າງ

- ມີເຮືອນບໍ່ມີຝາ 1
- ມີນາບໍ່ມີຮ່ອງ 1
- ມີປ່ອງບໍ່ມີຝາອັດ 1
- ມີວັດບໍ່ມີພະສົງ 1
- ມີກົງບໍ່ມີບ່ອນຫ້ອຍ 1
- ແຄນດວງດຽວຫມໍລຳພໍ້ຮ້ອຍ 1
- ຂ້ອຍຜູ້ດຽວເຈົ້າເຮືອນສິບຄົນ 1
- ເຮືອລຳດຽວໄປໃສເຫມີດບ້ານ 1
- ຢ້ານຜອກພົ້ນມາແລ່ນຕຳຕໍ 1
- ເພິ່ນບໍ່ຂໍໂຕຊໍ້າຜັດໃຫ້ 1

### ຄອງກ່ອຍຮ້າຍ 10 ປະການ

- ເພິ່ນບໍ່ເອີ້ນໂຕຂານ 1
- ເພິ່ນບໍ່ວານໂຕຊ່ອຍ 1
- ເພິ່ນບໍ່ໃຫ້ໂຕຊໍ້າລັກເອົາ 1
- ບ່ອນຄົນເຊົາພາໂລຂີ້ໃສ່ 1
- ຕື່ນມື້ເຊົ້າຂີ້ໃສ່ທາງຫລວງ 1
- ເວົ້າຕຶກຕວງວ່າເພິ່ນເປັນຮ້າຍ 1
- ຍ້າຍຄຳເວົ້າຍໍຍ້ອງແຕ່ໂຕ 1
- ເວົ້າໂວ ໆ ຍົກໂຕແທນຂຶ້ນ 1
- ເວົ້າຫົ້ນລົ້ນ ເຮັດຫນ້າບໍ່ອາຍ 1
- ໂຕຕ່ຳເວົ້າຈູງຜູ້ສູງ 1

# ການສຳຫລວດ
# ຢູ່ເມືອງເຊບັ້ງໄຟ ແລະ ເມືອງຫີນບູນ
# ແຂວງຄຳມ່ວນ

ໂດຍ : ທົງສັກສິດ

**ພາຍ**ຫລັງສຳຫລວດຢູ່ເມືອງຫນອງບົກ ແລະເມືອງທ່າແຂກສຳເລັດແລ້ວ ຫນ່ວຍສຳຫລວດກໍ່ໄດ້ເຄື່ອນໄຫວສຳຫລວດຢູ່ 2 ຕົວເມືອງຄື : ເມືອງເຊບັ້ງໄຟ ແລະ ເມືອງຫີນບູນ.



ເມືອງເຊບັ້ງໄຟ ເປັນເມືອງທີ່ຕັ້ງໃຫມ່ ຢູ່ແຄມທາງເລກທີ 13 ໃຕ້ ແລະ ສາຍນ້ຳເຊບັ້ງໄຟ ແຍກອອກຈາກເມືອງຫນອງບົກ ໃນລະຫວ່າງ 1990 ທີ່ຜ່ານມື້. ມີເຂດແດນຕິດກັບ ເມືອງໄຊບູລີ ແຂວງ ສະຫວັນນະເຂດ.

ເຖິງວ່າເມືອງຈະຕັ້ງຂຶ້ນໃຫມ່ກໍ່ຕາມ ແຕ່ວ່າກຸ່ມກຸານບ້ານເຮືອນຂອງພໍ່ແມ່ປະຊາຊົນຜັດດັ້ງເດີມ ແລະ ມີວັດວາອາຮາມທີ່ເກົ່າແກ່ຫລາຍສົມຄວນ. ແຕ່ກໍ່ຫນ້າເສັຍດາຍ ຄັນເວົ້າເຖິງຫນັງສືໃບລານ ຊ້ຳຜັດມີຫນ້ອຍ ຕາມການເລົ່າຂອງຊາວບ້ານຕຶງທີ່ເວົ້າວ່າ : ແຕ່ກ່ອນປີ 1970 ຄືນຫລັງມີຫນັງສືໃບລານຫລາຍທີ່ສຸດ ຈົນເຫລືອຕູ້ ເຫລືອຫີບ ມາຮອດປັດຈຸບັນນີ້ ເສັຍໄປເກືອບຈົນຫມົດ ສ່ວນຫລາຍມີແຕ່ສ້າງຂຶ້ນມາໃຫມ່. ເມືອງນີ້ສຳຫລວດໄດ້ 4 ວັດ ມີຫນັງສື 1.291 ຜູກ.



ສ່ວນເມືອງຫີນບູນ ຍ້າຍອອກຈາກເສັ້ນທາງເລກທີ 13 ໃຕ້ໄປຕັ້ງຢູ່ປາກນ້ຳຫີນບູນ ຫ່າງຈາກເມືອງເກົ່າປະມານ 25 ກິໂລແມັດ ເປັນເມືອງທີ່ຕັ້ງຂຶ້ນໃຫມ່. ທິດເຫນືອຕິດກັບເມືອງປາກກະດິງ ແລະ ທິດຕາເວັນອອກຕິດກັບເມືອງຄຳເກີດ ແຂວງບໍລິຄຳໄຊ. ປະຊາຊົນທີ່ອາໄສຢູ່ໃນເຂດເມືອງເປັນເຜົ່າຜູ້ໄທ ພວກເຂົາເຈົ້ານັບຖືສາສນາພຸດ. ແຕ່ກ່ອນນີ້ມີຫນັງສືໃບລານຢ່າງຫລວງຫລາຍ ໂດຍສະເພາະຢູ່ຕາມລ່ອງແມ່ນ້ຳຂອງ, ແມ່ນ້ຳຫີນບູນ ແລະ ເຂດບໍ່ໂພນຕິ້ວ. ຍາຄູສິງ ອະ

ດີດ ອ.ພ.ສ. ເມືອງເວົ້າວ່າ: ຫນັງສືໃບລານເສັຽຫາຍ ຍ້ອນຄູບາອາຈານບໍ່ຄ່ອຍເທດໃບລານ ມີແຕ່ເທດປຶ້ມເຊິ່ງເປັນເຫດໃຫ້ຄຳຜີ ໃບລານຢູ່ໃນຕູ້ຄຳຜີລ້າໆ ແລະ ບໍ່ຄ່ອຍໄດ້ກວດກາເບິ່ງເລີຍ ໃນແຕ່ລະປີ. ຫລັງຈາກເພິ່ນເທດແລ້ວ ເພິ່ນກໍ່ບໍ່ຄ່ອຍເອົາເຂົ້າຜູກເຂົ້າມັດຄືນຄືເກົ່າ ມີແຕ່ເອົາປະໄວ້ຢູ່ຊະຊາຍຕາມອື່ ຕາມຫລັງຕູ້ຕາມຮ້ານພຣະ ແລະ ຫ້ອຍໄວ້ຕາມເສົາກຸຕິ ບໍ່ຫນີບໄມ້ຄຳຜີ (ໄມ້ປະກັບ) ເປັນເຫດໃຫ້ຫນັງສືໃບລານຄົດງໍ່ບິດບ້ຽວ ແລະໃນທີ່ສຸດຫນັງສືໃບລານເຫລົ່ານັ້ນກໍ່ຫັກ ແລະຂາດຫາຍໄປເປັນຫນ້າເສັຽດາຍເມືອງນີ້ສຳຫລວດໄດ້ 11 ວັດ ມີຫນັງສື 5.344 ຜູກ.



---

## ຜະຫຍາຍ່ອຍ

(ບາງຕອນຄັດຈາກປຶ້ມຜະຫຍາຍອ່ອຍຂອງ ມະຫາບຸນຍົກ ແສນສູນທອນ)

- ຜີ່ປີ້ ແນວຄວາຍຕູ້
  ເອົາຕູ້ປູ້ຕີ້ປີ້
  ຮົ້ວສີ່ດ້ານຫ້າດ້ານ
- ສັດຈະຜູ້ຍິງນີ້
  ກົ້ມໃສ່ນ້ຳ
- ລົມພານຕ້ອງ
  ງ່າໄມ້ແຫ້ງ
- ຜີ່ປີ້ ແນວນາມເຊື້ອ
  ບໍ່ມີສົມເຜົ່າຜູ້
- ໂຊມໂຊເກົ້າ
  ມີແຕ່ມັບແມບລົ້ນ
- ຫາງເສັ້ນເກົ່າ
  ຢ່າຫຽວຫາງຮົກ
  ຢ່າໄດ້ເຫລືອແຕ່ຕ້ານ
  ເວົ້າບໍ່ເປັນປະໂຫຍດນີ້
- ແນວເດັກນ້ອຍ
  ຄວາມຮູ້ສັ້ນອໍ້ຫລໍ້

ເອົາກວາມຕາກົ້ມຊຸມຊູ່
ນອນລີ້ເກືອກອີ້ຕົມ
ບຸເຂົ້າໂຄບດຽວ
ຄືກວຍກະຕ່າຫ່າງ
ໄຫລເຂົ້າຄູ່ຕາ
ໃບຕອງກວັກແກວ່ງ
ລົມຕ້ອງແຫ່ງກວຍ
ຫອຍນາຫນ້າຕ່ຳ
ຫອຍກວ້າງບ່ວງຊະເລ
ລິງໂຫນກົ້ນອີ້ດ່າງ
ປາຍໄມ້ລອກຄືນ
ຢ່າກວດຫນາມປົກ
ປ່າດົງເສືອຮ້າຍ
ໂວງຜົ້ນເພື່ອນ
ຜີຮ້າຍຊິແລ່ນຕຳ
ຕາກໍ່ຄວາມຄິດມໍ່
ຄວາມເວົ້າຢູ່ດາວ

- ກໍ່ຊິເປັນຫວັດ
  ກໍ່ຊິໄປຢູ່ດົນ
  ກໍ່ຊິມາໄວ
- ເປັນອຸນກະຈານີ້
  ພໍ່ນາເອື້ອມອິ່ມເຂົ້າ
- ຍາມເມື່ອຊິນລະຫານ້ຳ
  ມົດບໍ່ມີບ່ອນຊຸ້ນ
  ຍາມເມື່ອຊິນລະຫາແຫ້ງ
  ມົດງ່າມມັນກະເຈາະກະຈອກເວົ້າ
- ດອກເກດແກ້ວ
  ກົກຫນຶ່ງເຊ
  ມ້ຽນໄວ້ກ້າອ້າຍ
- ມີເກັດຫອຍ
  ມີເກັດອ້ອຍ
- ຍາມເມື່ອເຈົ້າຫນຸ່ມນ້ອຍ
  ບຸນເຮົາມີ
  ໄປພາຍຫນ້າ

ຄອບຕາກຝົນ
ຄອບເປັນໄຂ້
ຄອບຄິດຮອດແມ່ສຽວ
ເປັນພໍ່ນາດີກວ່າ
ອຸນກະຈາເອື້ອມອິ່ມລົມ
ໄຫລມານອງກ້ວມທົ່ງ
ປາກົ້ງອະເຫິ່ຍຫິວ
ວັງຫນອງເຂີນຂາດ
ຫິວລໍ້ຕໍ່ປາ
ກ້ານກ່ອງສະເລເຕ
ກົກຫນຶ່ງຊ້າຍ
ສາມປີປາຍ ຊິໄດ້ບໍ່
ເຮັດຫລາຍໄດ້ຫນ້ອຍ
ເຮັດຫນ້ອຍໄດ້ຫລາຍ
ໃຫ້ຮິບຮ່ຳຮຽນຄຸນ
ຊິໃຫຍ່ສູງພຽງຟ້າ
ຊິຫາເງິນໄດ້ງ່າຍ

# ປູ່ສອນຫລານ

(ຕໍ່ຈາກສະບັບທີ 18)

.ໂດຍ : ບຸນເລີດ ທຳມະຈັກ
( ລານວັດ ບ. ປົ່ງດົງ ຂ. ສະຫວັນນະເຂດ )

ຄັນເພິ່ນເຫັນ
ບາດໂຫດຕ້ອງ
ໃຈພາໂລ
ຢ່າຫຽບແທ້
ຂ້າລັກຫນີ
ງ້ອນກິນເບື່ອ
ລືມໃຈເປື້ອນ
ມັນຈັກເປັນລ່ອງຄ້ອງ
ນ້ຳໄຫດຽວ
ເພິ່ນນັ່ງໄຫ້
ການຈຳຕົວ
ຝູງເພື່ອນໄກ້
ເມັຽກັບຜົວ
ບາດລາງເທື່ອ
ຄວາມໂມຫັງ
ພີ່ແລະນ້ອງ
ມັກຫຽວທາງ
ໄປທາງຕ່ຳ
ເອົາຄວາຍໂທນ
ແນວສາດຄ້າ
ລືມໃຈເປື້ອນ
ທຸດຈະຣິດ
ອັດສະຈັນ
ຄັນຟັນຂວານ
ຄັນຍິງຫນ້າ
ເຖິງສາລາ
ຄວາມຮູ້ນ້ອຍ
ຜົວເພິ່ນຍັງ
ໃຜມັກສູ້
ຕາຍ-ເກີດມາ
ປູ່ສັ່ງແລ້ວ

ໂຕຢ່າອຳເຊື່ອງໄວ້
ມັນປີ້ນໃສ່ໂຕ
ຢ່າຫາມາປຽບ
ຝູງນີ້ບໍ່ດີ ຫລານເອີຽ !
ຢ່ານຳຫລາຍເທື່ອ
ຢ່າໄດ້ໄວ້ໃນເຮືອນ
ຢ່າເອົາເຮັດພີ່ນ້ອງ
ຄືກຽວຫລາຍຄົນ ແທ້ເນີ້ !
ມອດໄຟບໍ່ໄດ້
ໂຕຢ່າໄດ້ນັ່ງຫົວ
ຫາໃຜບໍ່ໄດ້
ເອົາບໍ່ມີກົວ
ຢ່າທຳໃຈເຊື່ອ
ມັນເບື່ອໃຈຊັ່ງ ກໍມີ !
ມັນມາແລ່ນຕ້ອງ
ບໍ່ແມ່ນໃຈດຽວ
ຢ່າໄດ້ຂຽວຄ່ຳ
ໃນປ່າດົງຫລວງ
ຢ່າເອົາເຮັດດ້າມພ້າ
ຢ່າໄດ້ເອົາມຸງເຮືອນ
ຢ່າໄດ້ເອົາເປັນມິດ
ມີສີ ສາມອັນ
ປັນຍາຖ້ວນທ້າ
ໃຫ້ຫລຽວເບິ່ງຜ້າ
ໃຫ້ຫລຽວເບິ່ງປາຍປືນ ກ່ອນເນີ !
ຢ່າຈາເມັຽທ່ານ
ຢ່າຜ່ານຄອງເມືອງ
ຢ່າອັນເປັນຊູ້
ໄປສູ່ອະບາຍ
ເປັນເວນບໍ່ແລ້ວ
ຫລານຫລ້າໃຫ້ຈື່ຈຳ ປູ່ເນີ້.

# ຍອດນ້ຳອຸລາ ເມືອງມະຫາໄຊ

*ໂດຍ : ຄຳສິງ ວົງສະຫວ່າງ*

ໃຜຜູ້ໄປເຖິງນ້ຳ
ມີວັງໃສສ່ອງແຈ້ງ
ຝູງຫມູ່ປູປາກຸ້ງ
ຄົນບໍ່ອາດຊອກໄດ້
ນ້ຳບໍ່ເຄີຍເຫືອດແຫ້ງ
ມີຜູ້ເຖົ້າກ່າວເວົ້າ
ສົມຄວນເປັນບ່ອນຫ້າມ
ຍາມມັນໃຫຍ່ລອຍລ່ອງຫລີ້ນ

ຂຸນອຸລາໄດ້ຫລຽວເບິ່ງ
ງາມແທ້ດັ່ງຂຽນ
ໃນວັງຫລາຍຂະຫນາດ
ເພາະວັງນີ້ເພິ່ນຢຳ
ເຕັມດີສະເຫມີເກົ່າ
ວັງນີ້ເພິ່ນສະຫງວນ
ໃຫ້ປູປາໄດ້ວາງໄຂ່
ລົງໃຕ້ຈຶ່ງໂຕ່ງເອົາ ທ່ານເອີຍ..!



# ເວດສັນຕຣະຊາດົກ (ລຳພະເຫວດ)

*ມູນເຫດແຫ່ງການນຳໃຊ້ເປັນບຸນປະຈຳຊາດ*

*ຖອດຄວາມຈາກລານທຳສະພຸດແຫ່ງຊາດ* *ໂດຍ : ບຸນເລີດ ທຳມະຈັກ*

**ລຳ** ພະເຫວດ ຫລື ບຸນພະເຫວດ ເຊິ່ງເປັນປະເພນີຮີດສິບສອງຄອງສິບສີ່ ຂອງລາວໄດ້ປະຕິບັດກັນມາ ວ່າ " ເດືອນສາມຄ້ອຍ ເຈົ້າຫົວຄອຍປັ້ນເຂົ້າຈີ່ ເດືອນສີ່ຄ້ອຍ ເພນນ້ອຍເທດມະທີ " ສ່ວນຫລາຍມັກເຮັດບຸນພະເວດ ຫລື ບຸນມະຫາຊາດໃນໄລຍະເດືອນສີ່ເພັງ ເປັນປະເພນີສືບກັນມາທຸກໆພາກຂອງປະເທດ ແຕ່ຫລາຍຄົນຍັງບໍ່ຮູ້ມູນເຫດແຫ່ງການເທສນາແຫ່ງເວດສັນຕຣະຊາດົກ ດັ່ງຈະໄດ້ຍົກມາເປັນເນື້ອໃນດັ່ງລຸ່ມນີ້.

ເມື່ອສົມເດັດພະສັມມາສັມພຸດທະເຈົ້າຂອງພວກເຮົາ (ຊາວພຸດ) ໄດ້ຕັດສະຣູ້ທັມ ພະອົງຊົງເລາະທ່ຽວໂຜດສັດໂລກທັງມວນເມື່ອກ້ວນພັນສາແລ້ວຊົງປະທັບຢູ່ທີ່ກຸງຣາຊະຄຶຫະນະຄອນ ຂອງພະເຈົ້າພິມພິສານ, ເມື່ອພຣະຣາຊບິດາຊື່ສຸດໂທທະນະມະຫາຣາດ ຮູ້ຂ່າວຈຶ່ງໃຊ້ໃຫ້ ກາລຸທາຍີ ມະຫາອຳມາດໄປຣາດທະນານິມົນພະອົງໃຫ້ກັບຄືນກຸງກະບິລພັດພ້ອມດ້ວຍ ພະສົງສາວົກປະມານນຶ່ງແສນອົງ. ເມື່ອພະພຸທເຈົ້າຊົງຮັບນິມົນ ຈຶ່ງໄດ້ເດີນທາງຈາກຣາຊຄຶຫະນະຄອນ ມຸ່ງໜ້າສູ່ ກະບິລພັດ ແຫ່ງພະເຈົ້າ ສິຣິສຸດໂທທະນະ ອົງເປັນພຸດທະບິດາ, ຊາວສາກະຍະຣາດ (ຍາດພີ່ນ້ອງ) ຕ່າງກໍດີໃຈ ທີ່ຈະໄດ້ເຫັນສິດທັດຖະຣາຊກຸມານ ຜູ້ເປັນລູກເປັນຫລານ ເປັນຍາດພີ່ນ້ອງ ທີ່ໄດ້ມີຊື່ສຽງລືຊາ ພາກັນຈັດຕ້ອນຮັບທີ່ອຸດທະຍານນິໂຄທະອາຣາມ ກະກຽມໄວ້ເປັນຢ່າງດີໂດຍໄດ້ຈັດໃຫ້ຊາວໜຸ່ມກຸມມາລີ ເປັນຜູ້ອອກໜ້າພາທາງ. ສ່ວນເຊື້ອພະວົງຜູ້ມີຄວາມອວດອົ່ງທະນົງໂຕວ່າ "ສິດທັດຖະກຸມມານ" ເປັນລູກເປັນຫລານ ແລະ ນ້ອງຂອງພວກເຮົາຈະບໍ່ນົບໄຫວ້ໃຫ້ຄວາມເຄົາລົບເລີຍ. ໃຫ້ລູກຫລານຊາວໜຸ່ມກຸມມານໄຫວ້ກໍແລ້ວ. ພຸດທະເຈົ້າຮູ້ເຖິງອຸປນິດໄສຈຶ່ງເຂົ້າສູ່ອະພິນຍານ(ຊານ)ສະເດັດເຫາະຂຶ້ນສູ່ອາກາດ ຄືດັ່ງຣາຊຫົງຄຳຕົວອົງອາດບິນຂຶ້ນສູ່ອາກາດ ໃຫ້ເຫັນກັບຕາ ທັງເຮັດໃຫ້ເກີດອິຣິຍະບົດທັງ 4 ມີ ອາການນັ່ງ ນອນ ຢືນ ເດີນ ໃນຫ້ອງອາກາດຄົນດຽວ, ໃນເວລານັ້ນພະເຈົ້າສຸດໂທທະນະ ອົງບິດາ ເຫັນມະຫັດສະຈັນ ຈຶ່ງໄດ້ກ່າວຂຶ້ນວ່າ ໃນເວລາເກີດໄດ້ 7 ວັນ ເມື່ອຈັກກຸວາຍພະນາມກໍມີຊະຕິນກາລະເທວິນໄດ້ມາໄຫວ້ແລ້ວ ຊົງປະທັບເທິງພະສຽນແຫ່ງອົງລືສິດາບົດນັ້ນ, ຂ້າພະເຈົ້າ ກໍໄດ້ອະພິວາດ (ໄຫວ້) ລູກເປັນປະຖົມທີວທີ. ເມື່ອອາຍຸໄດ້ 7 ປີ ມີພິທີແຮກນາໃໝ່, ໃຕ້ຮົ່ມໄມ້ຫວ້າທີ່ລູກປະທັບ ບໍ່ໄດ້ຫຍັບຍ້າຍໄປຕາມເງົາຂອງພະອາທິດ ຂ້າພະເຈົ້າ ກໍໄດ້ໄຫວ້ລູກເປັນເທື່ອທີສອງ. ບັດນີ້ອິດທິປາຕິຫານແຫ່ງບຸນຍະສົມພານ ເຫັນມາປານດັ່ງນີ້ ຂ້າພະເຈົ້າຈຶ່ງຂໍກາບລົງເປັນເທື່ອທີສາມ, ເມື່ອພວກຍາດຕິກາວົງສາເຫັນພະຣາຊາແຫ່ງ ແຄວ້ນກະບິລພັດ ໄດ້ນະມັດສະການ ໃຜໆກໍບໍ່ອາດທົນທານໄດ້ ຈຶ່ງພ້ອມກັນໄຫວ້ສາທຸການ ເຮັດໃຫ້ພະອົງປະທານອະໄພກັບລົງສູ່ທີ່ບັນທົມດັ່ງເກົ່າ ເລົ່າສະແດງທັມມະເທສນາ, ໃນເວລານັ້ນເມກໃຫຍ່ເກີດເປັນຝົນຕົກລົງທ່າມກາງໝູ່ປະຊາລາດ ເອີ້ນວ່າໂບກຂະລະພັດ, ໝາຍເຖິງຜູ້ໃດຕ້ອງການປຽກຊຸ່ມຈຶ່ງຖືກຕ້ອງເນື້ອຕົນ ສ່ວນຜູ້ທີ່ບໍ່ຕ້ອງກໍບໍ່ປຽກແມ່ນແຕ່ຢາດນ້ຳດຽວ ເຮັດໃຫ້ເປັນອັດສະຈັນທີ່ຍິ່ງໃຫຍ່ ໃຜໆກໍເລົ່າລືກັນແມ່ນແຕ່ພະສົງສາວົກ (ລູກສິດ) ຍັງເກີດພິດສະຫວົງງົງງັນກ່າວຂານກັນໄປມາ. ພະພຸດທະເຈົ້າຈຶ່ງຕັດ ເທສນາວ່າ "ຝົນໂບກຂະລະພັດ" ເຄີຍຕົກລົງໃນຄາວທີ່ພະອົງຍັງສະເວີຍຊາດເປັນເວດສັນຕຣະກຸມມານ ເມື່ອຈະກັບສູ່ສະຖານເປັນກະສັດຈຶ່ງນຳເອົາອະດີດນິທານມາເທສນາເປັນມະຫາຊາດມີ 13 ກັນ ນຶ່ງພັນຄາຖາ ດັ່ງຈະຍົກມາເປັນອຸທາຫອນໃນ "ທັດສະພອນກັນຕົ້ນ" ມີ 19 ພະຄາຖາ ດັ່ງນີ້: ພິກຂຸທັງຫລາຍໃນອະດີດຕະການ ມີພຣະຣາຊາ ພຣະນາມວ່າ ສີວິຣາຊ ຜ່ານຣາຊສົມບັດໃນເມືອງ ເຊຕຸຕະຣະຣາຊທານີ (ໃນນາມປະເຊໄຊ) ມີບຸດຊາຍຜູ້ເກີດຈາກອັກຄຣະມະເຫສີຊື່ ສົນໄຊກຸມມານ, ເມື່ອສົນໄຊໃຫຍ່ 16 ປີ ພຣະຣາຊບິດາໄດ້ຫາຣາຊກັນຍາມີນາມວ່າ "ຜຸສສະດີ" ຈາກຣາຊຕະກູນແຫ່ງພຍາມັດທະຣາດ (ແຫ່ງແຄວ້ນສີພີ) ນີ້. ເປັນຕົ້ນບຸບພຣະປະໂຍກແຫ່ງຕະກຸນເດີມໃນອະດີດນິທານ. ອັນນາງອັກຄະມະເຫສີຜຸສສະດີມີຕຳນານກ່າວວ່າ " ໃນອະດີດຕະຊາດປາງເມື່ອພຣະສັມມາສັມພຸດທະເຈົ້າ ຕົນຊື່ ວິປັດສີ ບັງເກີດໃນໂລກແຫ່ງກັບທີ່ 91 ພຸ້ນ ພະນາງໄດ້ອຸບັດເປັນຣາຊບຸດຕີ ຂອງພະຍາພັນທຸມະຣາຊແຫ່ງແຄວ້ນພັນທຸມະຕີນະຄອນ. ຣາຊທິດາຂອງພະອົງມີສອງສາວ ເມື່ອພຣະຣາຊາແຫ່ງພຣະນະ

ຄອນອື່ນ ໄດ້ສິ່ງບັນນາການດອກໄມ້ຄຳ ມູນຄ່າແສນຄຳ ແລະ ແກ່ນຈັນຫອມ ອັນມີຣາຄາມາຖວາຍ ພະອົງໄດ້ມອບເຄື່ອງບັນນາການໃຫ້ເປັນຂອງຂວັນແກ່ທິດາທັງສອງ ແລ້ວເຈົ້າຍິງທັງສອງ ຈຶ່ງຂໍອະນຸຍາດນຳເອົາບັນນາການໄປຖວາຍບູຊາແກ່ພຣະເຈົ້າວິປັດສີ ເພື່ອກະທຳບູຊາດ້ວຍດອກໄມ້ຄຳ ແລະເຄື່ອງຈັນຫອມເຫລົ່ານັ້ນ ຜູ້ພີ່ໄດ້ຕັ້ງຄວາມປາຖນາວ່າ ຂໍໃຫ້ຂ້າພະເຈົ້າໄດ້ເປັນພຸດທະມານດາແຫ່ງສັມມາສັມພຸດທະໃນອະນາຄົດຕະການ ຝ່າຍທິດາອົງນ້ອຍໄດ້ຖວາຍບູຊາດ້ວຍເຄື່ອງປະດັບດອກໄມ້ຄຳ ແລະຄຳປາຖນາວ່າ ເກີດມາຊາດໃດໆ ຂໍໃຫ້ມີເຄື່ອງປະດັບປະດາທີ່ເປັນຄຳເກີດພ້ອມກັບສະຣີຣະຮ່າງກາຍພະເຈົ້າໄດ້ອະນຸໂມທະນາວ່າ ຂໍຄວາມປາຖນາແຫ່ງທ່ານ ຈົ່ງເປັນໄປຕາມຄວາມປະນິທານໄວ້ເທີ້ນ ດັ່ງນີ້ ດ້ວຍກຸສົນຜົນລະບຸນ ໄດ້ບູຊາພຣະວິປັດສີສັມພຸດທະເຈົ້າທິດາທັງສອງ ໄດ້ວຽນວ່າຍໃນມະນຸດສະໂລກ ແລະສວັນຄະໂລກເປັນເວລາຊ້ຳ ນານໃນຊາດທີ່ເກີດເປັນຜຸສສະດີອັນມີຄວາມໝາຍວ່າ ມີຮ່າງກາຍອັນຫອມ ປະຜົມໄປດ້ວຍເຄື່ອງຈັນຫອມທົ່ວຮ່າງກາຍ ດ້ວຍຜົນບຸນອັນໄດ້ຖວາຍແກ່ນຈັນແດງແຕ່ງເປັນຜົງບູຊາແລ້ວ, ນາງໄດ້ເກີດເປັນອັກຄະມະເຫສີ ແຫ່ງທ້າວມັກຄະວານ ຫລື ສັກກະເທວະຣາດໃນຊັ້ນຕາວະຕິງສາສະຫວັນ (ໃນຊື່ວ່າ : ນາງສຸທັມມາ) ເມື່ອເວລາຄົບກຳນົດແຫ່ງປາຖນາ ທີ່ຈະລົງມາບຳເພັນບຸນ ເປັນແມ່ພຣະເຈົ້າ ທ້າວສັກກະເທວະຣາດ ຊົງຮູ້ບຸບພະນິມິດ 5 ປະການ ອັນເກີດແກ່ນາງ ຈຶ່ງຊົງພານາງສະເດັດໄປທ່ຽວຊົມນັນທະວັນອຸດທະຍານໃນສະຫວັນຊັ້ນຕາວະຕິງສາ ກ່າວນິມິດໃຫ້ນາງຊາບ ແລະ ຈະໃຫ້ພອນທິບສິບປະການແກ່ນາງ ເມື່ອພະນາງຜຸສສະດີຮູ້ວິຖີແຫ່ງຄວາມປາຖນາທີ່ຕົນເຄີຍກະທຳໄວ້ ຈະໃຫ້ຜົນ ຈຶ່ງໄດ້ຮັບເອົາພອນທິບສິບປະການ ດັ່ງອາຈານ ຜູ້ຣິດຈະນາຄຳພີເວສສັນຕຣະທີປານີໄວ້ 10 ປະການດັ່ງນີ້:

1. ຂ້າແຕ່ທ້າວສັກກະເທວະຣາຊ ຂ້າພະບາດຂໍຮັບເອົາ ພອນອັນຖ້ວນຕົ້ນ ຄືໃຫ້ມີຕາດຳເໝືອນດັ່ງຕາລູກເນື້ອ ອັນເກີດແລ້ວໄດ້ຂວບໜຶ່ງປີ
2. ຂໍໃຫ້ມີຂົນສີ້ວດຳ ແລະກວມກ່ອງດັ່ງຄັນສອນ
3. ໃຫ້ເກີດໃນນະຄອນຣາຊນິເວດຊື່ວ່າຜຸສສະດີ
4. ຂໍໃຫ້ມີບຸດຜູ້ປະເສີດ ມັກໃຫ້ເກີດທານະວັດຖຸອັນເລີດປະກອບເກື້ອແກ່ຍາຈົກ ວະນິພົກ ຄົນຂໍເປັນທີ່ສັນລະເສີນແກ່ຊາວຕ່າງດ້າວ ດ້ວຍຍົດສັກລືຊາ
5. ເມື່ອເວລາຕັ້ງຄັນຢ່າໃຫ້ອຸທອນໝູນຂຶ້ນໃຫ້ຮາບກ້ຽງຄືດັ່ງທ້ອງປົກກະຕິ
6. ຂໍໃຫ້ຖານະນົມທັງຄູ່ໃຫ້ຕັ້ງຢູ່ຄືນົມສາວ ບໍ່ຢອນຍາວຄືຄົນທົ່ວໄປ
7. ຍາມທົ່ວຣະໄວແກ່ຄ່ອມ ຜົມທົ່ວເທົ້າຢ່າໄດ້ຫງອກຂາວໂພນ
8. ຂໍຢ່າມີທຸລີຜົງຕິດສະກົນລະກາຍແຫ່ງຂ້າ
9. ຂໍໃຫ້ມີອຳນາດປາດເປື້ອງຕໍ່ຄົນຜິດໂທດປະຫານຊີວິດ ກໍ່ຂໍໃຫ້ພົ້ນໄດ້
10. ຂໍພະອົງຈົ່ງປະທານພອນອັນປະເສີດ ໃຫ້ໄດ້ເປັນເອກອັກຄະມະເຫສີ ແຫ່ງພຣະຣາຊາໃນແຄວ້ນສີພີ ໃນຣາຊນິເວດ ປະກອບດ້ວຍໝູ່ຣາຊກັນຍາໝູ່ນາຣີອະນັນເນກຈົ່ງກຶກກ້ອງດ້ວຍສຽງ ທັບປະຕູຫ້ອງອັນວິຈິດໃນຄາວໄຂແລະປິດ ມີຊົນບອກໃຫ້ຮູ້ດ້ວຍເຄື່ອງຄ້ຽວ, ກິນ ມີສຸຣາ ແລະຊີ້ນເນື້ອ.

ທ້າວສັກເທວະລາດ ກໍ່ຈຶ່ງໄດ້ປະກາດພອນທິບ ສິບປະການ ແກ່ນາງແກ້ວຜູ້ມີໂສມອັນງາມຕາມໃນຍະຄາຖາທັງ 19 ດ້ວຍບາດເຄົ້າ ແລະ ທົ່ນຫລັງ " **ຕາມັດຖົງປະກາເສນໂຕສັດຖາອາຫະ** " ສົມເດັດພຣະສັມມາສັມພຸດທະເຈົ້າເມື່ອຈະຊົງປະກາດຂໍ້ຄວາມນັ້ນ ຈຶ່ງຊົງພາສິດຄາຖາ ວ່າ: "**ອິທັງ ວັດຕະວາ ມະຄະວາ ເທວາ ຣາຊາສຸ ຊົມປະຕິຜຸສສະຕີຍາວະຣັງທັດຕະວາ ອະນຸໂມທິດຖະ ວາສະໂວ** " ດັ່ງນີ້ ຄັນເມື່ອ ວາສະວະມະຄະ ວາສຸຊົມບໍດີ ເທວະຣາຊປະກາດຢ່າງນີ້ແລ້ວ ກໍ່ປະທານພອນແກ່ ນາງຜຸສສະດີເທບພະອັບປະສອນ ພຣະອົງປະທານພອນທິບ 10 ປະການແລ້ວເປັນຜູ້ມີຈິດລື່ນເລີງ ບັນເທີງຍິນດີດ້ວຍປະການດັ່ງກ່າວມານີ້ " **ທະສະວະ ຣະຄາຖາ ນິດຖິຕັງ** ".

## ສຸພາສິດບູຮານ ( ໝວດຄຳ, ປັນຫາພາສິດ )

*(ບາງຕອນຄັດຈາກປຶ້ມສຸພາສິດບູຮານ ຂອງ ມະຫາສີລາ ວີຣະວົງສ໌)*

7 ສັງມາຍາກແທ້ເດ້ ຄວາຍຫລາຍໂຕຕຶງຈ່ອງ
ໂຕໜຶ່ງຂ້ອງວ່າຄອງ ໂຕສອງຂ້ອງວ່າຂາມ
ໂຕສາມຂ້ອງວ່າໝີ່ ໂຕສີ່ຂ້ອງວ່າຫວ້າ
ໂຕຫ້າຂ້ອງວ່າບົກ ໂຕຫົກຂ້ອງວ່າແຕ້
ໃຜຊິມາຊ່ອຍແກ້ ຄວາຍຂ້ອຍຈັ່ງຊິໄປ
24 ສອງເຂືອເຖົ້າ ທຳນາຢູ່ກາງໂຄກ
ປີບໍ່ໂຊກໄດ້ສາມ ປີບໍ່ງາມໄດ້ສີ່
ປີບໍ່ໄດ້ແທ້ໆ ຢາຍໃຫ້ລູກຄົນ
26 ໃຫ້ເຈົ້າເອົາຍາວໄວ້ ຄືສິບໄຊຟັນໄຮ່
ປີກາຍໄດ້ແຕ່ປ້າ ປີໜ້າຈັ່ງຄ່ອຍຮອນ
27 ເສື້ອຂາດຫລັງ ໄປຕາບກະບ່ອງໄກ່
ເສື້ອຂາດໄຫລ່ ໄປຕາບກະບ່ອງລີງ
ເສື້ອຂາດຂ້າງ ໄປຄ້າງເອົາຄວາຍ
28 ອັດສະຈັນໃຈກຸ້ງ ກຸມກິນປາບຶກໃຫຍ່
ປາຊິວມາໄລ່ແຂ້ ໜີໄປຊຸ້ນຫລືບຫີນ
29 ອັດສະຈັນໃຈໂອ້ ຕັກແຕນໂມປ້ອງໝູ່ມິ່ງ
ຂຽດຈະນາປ້ອງໝູ່ຊ້າງ ຢືນເກີ້ຢູ່ທົ່ງຫລວງ
30 ອັດສະຈັນໃຈແຂ້ ຫາງຍາວສັງບໍ່ໄດ້ຮອງນັ່ງ
ບາດກະຕ່າຍຫາງກ້ອມໆ ສັງມາໄດ້ນັ່ງຮອງ
31 ອັດສະຈັນອັດສະຈອ້ຍ ໄກ່ນ້ອຍໄຫ້ກິນນົມນຳກາ
ໝູໝາໄຫ້ ກິນນົມເສືອໂຄ່ງ
ສັດຕູກັມແທ້ໆ ສັງມາໄຫ້ແອ່ວກິນ
32 ອັດສະຈັນໃຈໂອ້ ເອົ້າສານຢູ່ໂອຍ່ຄໍຕອດໄກ່
ໄມ້ໄຜ່ຢູ່ກໍ ຍ່ຄໍຕອດຊ້າງ
ປາຢ້າງຢູ່ທົ້ງ ທະຍານເຕັ້ນຄຸບແມວ
ແມວເສຍໃຈ ແຖທົວໄປບວດ
ໝູຊິງຕາສວດ ເປັນແມ່ອອກຄ້ຳ
ຫຼຸງເອົ້າໃສ່ເຜນ.


### ເຈົ້າຂອງ

*ໂຄງການປົກປັກຮັກສາໜັງສືໃບລານລາວ*
*(ການຮ່ວມມືລາວ-ເຢຍຣະມັນ)*

### ສຳນັກງານຕັ້ງຢູ່

*ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ*
*ຫໍສະໝຸດແຫ່ງຊາດ*
*ຖະໜົນເຊດຖາທິຣາດ (ນ້ຳພຸ)*

ຕູ້ປ.ນ. 8818
ໂທ: (856-21) 251 405
ແຟັກ: (856-21) 213 029
E-mail : bailane@laotel.com

### ຄະນະຈັດທຳ

ທີ່ປຶກສາ : ດາລາ ກັບລະຍາ
: ບຸນຍົກ ແສນສູນທອນ
ຫົວໜ້າ ບ.ກ : ກົງເດືອນ ເນດຕະວົງ
ຮອງຫົວໜ້າ ບ.ກ : ບຸນເລີດ ທຳມະຈັກ
ຈັດໜ້າ ຄອມພີວເຕີ : ສີສຸພັນ ດວງມະນີ
ຕີພິມ ຄອມພີວເຕີ : ບົວສີ ສີປະເສີດ
ຖ່າຍພາບ : ຄຳແສງດາວ ປະຖຸມມະວົງ
: ຄຳສິງ ວົງສະຫວ່າງ
: ໄພວົງ ທົງສັກສິດ
: ຄຳມຸກ ສີລືອາໄພ